ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 1158 /ກອຫ.ຄຮ

ນະຄອນຫຼວງວຽງຈັນ,ວັນທີ 13 AUG 2020

## ແຈ້ງການ

**ເຖິງ:** ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ:** ເກັບກຳຂໍ້ມູນຄວາມຕ້ອງການແຮງງານ/ຕຳແໜ່ງງານຫວ່າງ ຂອງຫົວໜ່ວຍທຸລະກິດພາຍໃນ ແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມໜັງສືສະເໜີຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 1788/ຫກ, ລົງວັນທີ 19 ມິຖຸນາ 2020.
- ອີງຕາມບົດທຶກກອງປະຊຸມປຶກສາຫາລື ສະບັບເລກທີ 2438/ຮສສ, ລົງວັນທີ 24 ກໍລະກົດ 2020 ກ່ຽວກັບການຈັດຫາງານໃຫ້ກັບຜູ້ອອກແຮງງານລາວທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19.

ກົມອຸດສາຫະກຳ ແລະ ຫັດຖະກຳ ແຈ້ງມາຍັງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ປະຕິບັດ ດັ່ງນີ້:

1. ໃຫ້ແຈ້ງເຖິງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ພາຍໃນແຂວງ, ນະຄອນຫຼວງວຽງຈັນ ເພື່ອໃຫ້ສະໜອງຂໍ້ມູນຄວາມຕ້ອງການແຮງງານ/ຕຳແໜ່ງງານຫວ່າງ ຂອງແຕ່ລະໂຮງງານ ຕາມແບບຟອມແຈ້ງຕຳແໜ່ງງານຫວ່າງ ຂອງຫົວໜ່ວຍແຮງງານ ທີ່ຄັດຕິດມາພ້ອມນີ້.

2. ໃຫ້ສັງລວມຂໍ້ມູນຄວາມຕ້ອງການແຮງງານ/ຕຳແໜ່ງງານຫວ່າງ ຂອງແຕ່ລະໂຮງງານ ສົ່ງໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ກ່ອນວັນທີ 17 ກັນຍາ 2020 ເພື່ອສະໜອງໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊຸກຍູ້, ອຳນວຍຄວາມສະດວກໃຫ້ຜູ້ທີ່ຫວ່າງງານໄດ້ເຂົ້າເຖິງ ແລະ ຮັບຮູ້ຂໍ້ມູນຂ່າວສານຕະຫຼາດແຮງງານລາວດ້ວຍຫຼາຍຮູບແບບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມ

ປອ.ບົວວັນ ວິລະວົງ

ເອກະສານຂັດຕິດປະກອບມີ:

1. ແບບຟອມລົງທະບຽນຕຳແໜ່ງງານຫວ່າງ 1 ສະບັບ.

ຕິດຕໍ່ພົວພັນ ເພັດດາລາ ຊາມູນຕີ 020 5988 8383